ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************************

ສຳນັກງານນາຍົກລັດຖະມົນຕີ — ເລກທີ 11 / ນຍ

# ດຳລັດ
# ວ່າດ້ວຍ ການເຊົ່າສິນເຊື່ອ

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບເລກທີ 01/ສປສ ລົງວັນທີ 14 ສິງຫາ 1991;
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 01/95 ສປສ ລົງວັນທີ 8 ມີນາ 1995;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ແລະ ຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ.

## ນາຍົກລັດຖະມົນຕີ ອອກດຳລັດ :

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງຂອງດຳລັດ**

ດຳລັດວ່າດ້ວຍ ການເຊົ່າສິນເຊື່ອ ມີຈຸດປະສົງເພື່ອພັດທະນາ ແລະ ສົ່ງເສີມທຸລະກິດດ້ານການເຊົ່າສິນເຊື່ອ ແນໃສ່ຕອບສະໜອງ ຄວາມຮຽກຮ້ອງຕ້ອງການທາງດ້ານການເງິນ ແລະ ດ້ານ ວັດຖຸໃຫ້ແກ່ປະຊາຊົນ ລາວ ບັນດາເຜົ່າ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ ສັງຄົມ ຂອງ ສປປ ລາວ.

**ມາດຕາ 2. ນິຍາມຄຳສັບ**

1. "ຊັບ" ໝາຍເຖິງຊັບເຄື່ອນທີ່ ຫຼື ຊັບຄົງທີ່ ຊຶ່ງອາດເປັນເປົ້າໝາຍຂອງສັນຍາເຊົ່າ.
2. "ການເຊົ່າສິນເຊື່ອ" ໝາຍເຖິງ ການເຊົ່າ ຊຶ່ງມີກຳນົດເວລາເບື້ອງຕົ້ນແຕ່ ໜຶ່ງ ປີ ຂຶ້ນໄປຊຶ່ງ :
    1. ຜູ້ເຊົ່າເປັນຜູ້ກຳນົດຊັບ ແລະ ຄັດເລືອກຜູ້ສະໜອງ ໂດຍບໍ່ໄດ້ອີງ

ໃສ່ຄວາມສາມາດ ແລະ ການຕົກລົງ ຂອງຜູ້ໃຫ້ເຊົ່າ ແລະ

2. ຜູ້ໃຫ້ເຊົ່າໄດ້ຮັບຊັບ ໂດຍຜ່ານສັນຍາເຊົ່າສິນເຊື່ອແກ່ຜູ້ເຊົ່າ.

ການເຊົ່າໃດໜຶ່ງ ອາດ ເປັນການເຊົ່າສິນເຊື່ອໂດຍບໍ່ຂຶ້ນ ກັບວ່າ:

ກ. ການຊຳລະ ຄ່າເຊົ່ານັ້ນ ຈະຄິດໄລ່ເປັນການຊຳລະ ມູນຄ່າທັງໝົດຂອງຊັບ ຫລື ເປັນການຊຳລະ ສ່ວນທີ່ສຳຄັນຂອງມູນຄ່າຂອງຊັບ ຫລືບໍ່ກໍຕາມ; ຫລື

ຂ. ຜູ້ເຊົ່າ ໄດ້ມີທາງເລືອກ ໃຫ້ຊື້ຊັບ ຫລື ໃຫ້ເຊົ່າຕໍ່, ໃນລາຄາທີ່ແນ່ນອນ ຫລື ໃຫ້ຈ່າຍເປັນຄ່າເຊົ່າ ຫລື ບໍ່ກໍຕາມ.

3. "ບໍລິສັດໃຫ້ເຊົ່າສິນເຊື່ອ" ໝາຍເຖິງ ນິຕິບຸກຄົນ ທີ່ເຮັດສັນຍາເຊົ່າສິນເຊື່ອ ຢ່າງໜ້ອຍທີ່ກຄັ້ງຕໍ່ປີ. ບໍລິສັດເຊົ່າສິນເຊື່ອຕ້ອງໄດ້ຮັບການອະນຸມັດ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້.

4. "ການເຊົ່າ" ໝາຍເຖິງການຕົກລົງ ລະຫວ່າງ ຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າ, ໃນນັ້ນ ຜູ້ເຊົ່າໄດ້ຮັບສິດຄອບຄອງ ແລະ ນຳໃຊ້ຊັບ ໃນກຳນົດເວລາໃດໜຶ່ງ ແຕ່ຕ້ອງຈ່າຍຄ່າເຊົ່າ ຫລື ເງື່ອນໄຂອື່ນ ໆ ໃນການເຊົ່າ. ຜູ້ເຊົ່າມີສິດນຳເອົາຊັບທີ່ເຊົ່າໃຫ້ເຊົ່າຕໍ່ໄດ້.

5. "ຜູ້ໃຫ້ເຊົ່າ" ໝາຍເຖິງ ບໍລິສັດເຊົ່າສິນເຊື່ອ ຊຶ່ງໂອນສິດຄອບຄອງ ແລະ ນຳໃຊ້ຊັບໃຫ້ຜູ້ເຊົ່າ.

6. "ຜູ້ເຊົ່າ" ໝາຍເຖິງບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ສິດຄອບຄອງ ແລະ ນຳໃຊ້ຊັບ ຈາກຜູ້ເຊົ່າ.

7. "ຜູ້ສະໜອງ" ໝາຍເຖິງບຸກຄົນ ຫລື ນິຕິບຸກຄົນ ຊຶ່ງສະໜອງຊັບໃຫ້ຜູ້ໃຫ້ເຊົ່າ ເພື່ອນຳໄປໃຫ້ຜູ້ເຊົ່າ ເຊົ່າ. ຜູ້ໃຫ້ເຊົ່າອາດໄດ້ຊັບມາ ດ້ວຍການຊື້, ການເຊົ່າ, ການມອບສິດໃຫ້ຊື້ ຫຼື ໃຫ້ເຊົ່າ ລວມທັງການມອບສິດຈາກຜູ້ເຊົ່າ. ຜູ້ເຊົ່າ ອາດແມ່ນຜູ້ສະໜອງໃນສັນຍາການຂາຍເຊົ່າ ຊື້ຕໍ່ຊ່ວງ.

8. "ສັນຍາສະໜອງ" ໝາຍເຖິງ ການຕົກລົງ ຊຶ່ງຜູ້ໃຫ້ເຊົ່າ ໄດ້ຮັບສິດຄອບຄອງ ແລະ ນຳໃຊ້ຊັບ ທີ່ໃຫ້ຜູ້ເຊົ່າ.

9. "ກຳນົດເວລາ" ໝາຍເຖິງຂອບເຂດເວລາ ທີ່ກຳນົດໄວ້ໃນສັນຍາເຊົ່າສິນເຊື່ອ ຊຶ່ງຜູ້ເຊົ່າ ໄດ້ຮັບອະນຸຍາດໃຫ້ຄອບຄອງ ແລະ ນຳໃຊ້ຊັບທີ່ໄດ້ເຊົ່າ.

### ມາດຕາ 3. ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ໃຫ້ນຳໃຊ້ ສຳລັບການໃຫ້ເຊົ່າສິນເຊື່ອ .

## ພາກທີ II
## ຮູບການ ແລະ ເນື້ອໃນຂອງສັນຍາ ເຊົ່າສິນເຊື່ອ

ມາດຕາ 4. ຮູບການຂອງສັນຍາ

ສັນຍາ ເຊົ່າສິນເຊື່ອຕ້ອງເຮັດເປັນລາຍລັກອັກສອນ ເຊັ່ນໂດຍຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າ. ສັນຍາ ເຊົ່າສິນເຊື່ອ ຕ້ອງວາງເນື້ອໃນ ແລະ ເງື່ອນໄຂຂອງຄູ່ສັນຍາກ່ຽວກັບຊັບທີ່ໃຫ້ເຊົ່າ.

ສັນຍາເຊົ່າສິນເຊື່ອ ຕ້ອງນຳໄປຢັ້ງຢືນຢູ່ສຳນັກງານທະບຽນສານ ເວັ້ນເສຍແຕ່ກົດໝາຍຫາກໄດ້ກຳນົດໄວ້ຢ່າງອື່ນ.

ມາດຕາ 5. ສິດ ແລະ ພັນທະຂອງຜູ້ໃຫ້ເຊົ່າ

ຜູ້ໃຫ້ເຊົ່າມີພັນທະດັ່ງນີ້ :

1. ຈ່າຍຄ່າຊັບໂດຍບໍ່ມີເງື່ອນໄຂ ຫລື ການສະຫງວນໃດໆ ໃນເມື່ອຜູ້ເຊົ່າ ຫາກໄດ້ຮັບເອົາຊັບໄປແລ້ວ;
2. ຮັບປະກັນຄວາມສະຫງົບໃນການຄອບຄອງ ແລະ ນຳໃຊ້ຊັບທີ່ໃຫ້ເຊົ່າແກ່ຜູ້ເຊົ່າພາຍໃນກຳນົດເວລາຂອງການເຊົ່າ ໂດຍບໍ່ມີການແຊກແຊງຈາກຜູ້ໃຫ້ເຊົ່າ ຫລື ຈາກສາເຫດອື່ນໆ ທີ່ເນື່ອງມາຈາກຄວາມຜິດຂອງຜູ້ໃຫ້ເຊົ່າ;
3. ບໍ່ຮັບຜິດຊອບຕໍ່ຜູ້ເຊົ່າ ກ່ຽວກັບຊັບ ເວັ້ນເສຍແຕ່ຜູ້ເຊົ່າ ຫາກໄດ້ຮັບຄວາມເສັຍຫາຍຈາກການເຂົ້າແຊກແຊງຂອງຜູ້ໃຫ້ເຊົ່າ ໃນການເລືອກຊັບ ຫລື ໃນການກຳນົດມາດຕະຖານຂອງຊັບ;
4. ໃນຖານະທີ່ເປັນຜູ້ໃຫ້ເຊົ່າ ຫຼື ເປັນເຈົ້າຂອງຊັບ ຈະບໍ່ຮັບຜິດຊອບຕໍ່ບຸກຄົນທີສາມກ່ຽວກັບການເສັຍຊີວິດ, ການໄດ້ຮັບບາດເຈັບ ຫລື ໄດ້ຮັບຄວາມເສັຍຫາຍ ທີ່ເກີດມາຈາກຊັບນັ້ນ.
5. ໃນກໍລະນີທີ່ຜູ້ເຊົ່າ ຫາກໄດ້ລະເມີດສັນຍາເຊົ່າສິນເຊື່ອ, ນອກຈາກສິດທີ່ໄດ້ບົ່ງໄວ້ໃນສັນຍາເຊົ່າສິນເຊື່ອແລ້ວ, ຜູ້ໃຫ້ເຊົ່າ ຍັງມີສິດ ດັ່ງຕໍ່ໄປນີ້:
   - 5.1. ທວງເອົາຈຳນວນເງິນຄ່າເຊົ່າທີ່ຍັງບໍ່ທັນໄດ້ຈ່າຍ ພ້ອມດອັຍດອກເບັ້ຍ ແລະ ຄ່າເສັຍຫາຍຕ່າງໆ.
   - 5.2. ຖ້າວ່າການລະເມີດສັນຍານັ້ນ ຫາກເປັນການລະເມີດທີ່ຮ້າຍແຮງ, ຮຽກຮ້ອງໃຫ້ຊຳລະ ຢ່າງຮີບດ່ວນ ບັນດາມູນຄ່າເຊົ່າທີ່ຈະຈ່າຍໃນຂ້າງໜ້າ, ຫລຸດຜ່ອນຕາມມູນຄ່າໃນປັດຈຸບັນ ໃນອັດຕາທີ່ກຳນົດໄວ້ໃນສັນຍາເຊົ່າສິນເຊື່ອ ຫຼື ຖ້າບໍ່ໄດ້ກຳນົດອັດຕາໃດໆ ໃຫ້ຄິດໄລ່ຕາມອັດຕາເງິນເຟີ້ ໃນເວລາທີ່ໄດ້ປະກາດການລະເມີດ ຫຼື ລົບລ້າງສັນຍາເຊົ່າສິນເຊື່ອນັ້ນ. ການລະເມີດສັນຍາທີ່ຮ້າຍແຮງ ແມ່ນການລະເມີດດັ່ງຕໍ່ໄປນີ້ :

     ກ.) ຜູ້ເຊົ່າບໍ່ຈ່າຍຄ່າເຊົ່າ ສອງຄັ້ງຕິດຕໍ່ກັນ;

ຂ.) ຜູ້ເຊົ່າ ລະເມີດຂໍ້ຕົກລົງໃດໜຶ່ງ ຂອງສັນຍາເຊົ່າສິນເຊື່ອ ແລະ ບໍ່ໄດ້ແກ້ໄຂການລະເມີດນັ້ນ ພາຍໃນກຳນົດເວລາ ສິບ ວັນ ຫລັງຈາກໄດ້ຮັບແຈ້ງການເປັນລາຍລັກອັກສອນຈາກຜູ້ໃຫ້ເຊົ່າ;

ຄ.) ຜູ້ເຊົ່າ ມີຜູ້ຄ້ຳປະກັນ ຊຶ່ງເປັນຜູ້ທີ່ບໍ່ມີຄວາມສາມາດໃຊ້ແທນໜີ້ສິນ, ເປັນຜູ້ລົ້ມລະລາຍ ຫຼື ຜູ້ເຊົ່າ ບໍ່ສາມາດຊອກຫາຜູ້ປ່ຽນແທນ ຊຶ່ງເປັນທີ່ຍອມຮັບຈາກຜູ້ໃຫ້ເຊົ່າ ພາຍໃນກຳນົດເວລາ ສາມສິບ ວັນ ຕາມການສະເໜີເປັນລາຍລັກອັກສອນ ຂອງຜູ້ໃຫ້ເຊົ່າ; ຫຼື

ງ.) ຜູ້ເຊົ່າບໍ່ສາມາດຈ່າຍ, ເປັນຜູ້ລົ້ມລະລາຍ ຫລື ຖືກຍຸບເລີກ.

5.3. ຖ້າວ່າສັນຍາເຊົ່າສິນເຊື່ອ ຫາກສິ້ນສຸດກ່ອນກຳນົດເວລາ, ຜູ້ໃຫ້ເຊົ່າມີສິດ :

ກ.) ເອົາຊັບທີ່ໃຫ້ເຊົ່າຄືນ ໂດຍບໍ່ຮ້ອງຟ້ອງຕໍ່ສານ; ແລະ

ຂ.) ໄດ້ຮັບຄ່າເສັຍຫາຍ ເໝືອນດັ່ງທີ່ຜູ້ເຊົ່າ ໄດ້ປະຕິບັດສັນຍາເຊົ່າສິນເຊື່ອ ຢ່າງຄົບຖ້ວນ; ສັນຍາເຊົ່າສິນເຊື່ອອາດຈະກຳນົດວິທີ ຄິດໄລ່ຄ່າເສັຍຫາຍ, ຂໍ້ກຳນົດດັ່ງກ່າວ ມີຜົນບັງຄັບປະຕິບັດ ລະຫວ່າງຄູ່ສັນຍາ ເວັ້ນເສັຍແຕ່ຄ່າເສັຍຫາຍນັ້ນ ຫາກເກີນ ຄ່າເສັຍຫາຍ ທີ່ໄດ້ກ່າວມານີ້ຢ່າງຫຼວງຫຼາຍ.

6. ຜູ້ໃຫ້ສິນເຊື່ອມີສິດ ຕິດເຄື່ອງໝາຍ ໃສ່ຊັບ ໃນລັກສະນະ ທີ່ໃຫ້ເຫັນຢ່າງຈະແຈ້ງ ວ່າເປັນກຳມະສິດ ຂອງຜູ້ໃຫ້ເຊົ່າ ແລະ ຢູ່ໃນການຄອບຄອງ ແລະ ນຳໃຊ້ ຂອງຜູ້ເຊົ່າຕາມສັນຍາເຊົ່າສິນເຊື່ອ.
ຫ້າມຜູ້ເຊົ່າເອົາອອກ, ບັງ ຫລື ສີກເຄື່ອງໝາຍນີ້.

7. ຜູ້ໃຫ້ເຊົ່າ ມີສິດ ຮຽກຮ້ອງໃຫ້ຜູ້ເຊົ່າທົດແທນຄ່າເສັຍຫາຍ ທີ່ເນື່ອງມາຈາກ ການສູນເສັຍ, ການທວງຖາມ, ຄວາມເສັບຫາຍ ຫລື ຜົນສະທ້ອນອື່ນ ໆ ທີ່ເນື່ອງມາຈາກ ຫຼື ທີ່ຕິດພັນກັບ ການນຳໃຊ້ ແລະ ການຄອບຄອງຂອງຜູ້ເຊົ່າຊັບນັ້ນ.

8. ຜູ້ໃຫ້ເຊົ່າ ມີສິດຮຽກຮ້ອງໃຫ້ຜູ້ເຊົ່າ ຮັບເອົາ, ປົກປັກຮັກສາ ແລະ ຈ່າຍຄ່າປະກັນໄພກ່ຽວກັບຄວາມຮັບຜິດຊອບ ແລະ ຄ່າເສັຍຫາຍກ່ຽວກັບຊັບສິນ ທີ່ໃຫ້ເຊົ່າຕະຫລອດໄລຍະເວລາທີ່ຊັບນັ້ນຢູ່ໃນການຄຸ້ມຄອງຂອງຕົນ ຈົນຮອດເວລາທີ່ຊັບນັ້ນໄດ້ຖືກສົ່ງຄືນແກ່ຜູ້ໃຫ້ເຊົ່າ, ເຖິງວ່າກຳນົດເວລາເຊົ່າຫາກສິ້ນສຸດລົງ ຫຼື ສັນຍາເຊົ່ານັ້ນຫາກໄດ້ຖືກຍົກເລີກກ່ອນກໍຕາມ.

## ມາດຕາ 6. ສິດ ແລະ ພັນທະຂອງຜູ້ເຊົ່າ

1. ຜູ້ເຊົ່າ ມີພັນທະຮັບເອົາຊັບ ຖ້າວ່າຊັບນັ້ນ ຫາກໄດ້ສົ່ງໃຫ້ຕາມກຳນົດເວລາ ແລະ ຖືກຕ້ອງຕາມສັນຍາສະໜອງສິນຄ້າ. ຖ້າວ່າຊັບທີ່ໃຫ້ເຊົ່ານັ້ນ ບໍ່ໄດ້ສົ່ງ, ໄດ້ສົ່ງໃຫ້ຊັກຊ້າ ຫຼື ບໍ່ຖືກຕ້ອງຕາມສັນຍາສະໜອງສິນຄ້າ ໃນຂະນະ ຫຼື ກ່ອນເວລາຮັບເອົາຊັບນັ້ນ ແຕ່ບໍ່ແມ່ນລຸນຫຼັງ :

ກ. ຜູ້ເຊົ່າ ມີສິດບໍ່ຮັບເອົາຊັບ, ຮຽກຮ້ອງໃຫ້ຜູ້ສະໜອງສິນຄ້າສ້ອມແປງແກ້ໄຂສິ່ງບົກພ່ອງ ໃນທັນໃດ ຫຼື ຍົກເລີກສັນຍາ, ແຕ່ບໍ່ມີສິດຍົກເລີກ ຫຼື ປ່ຽນແປງສັນຍາສະໜອງສິນຄ້າ ໂດຍບໍ່ໄດ້ຮັບຄວາມເຫັນດີຂອງຜູ້ໃຫ້ເຊົ່າ;

ຂ. ຜູ້ໃຫ້ເຊົ່າ ມີສິດ ແຕ່ບໍ່ມີພັນທະໃນການແກ້ໄຂສິ່ງບົກພ່ອງ ເພື່ອໃຫ້ຊັບມີຄວາມສອດຄ່ອງກັບສັນຍາສະໜອງສິນຄ້າ.

2. ພັນທະຂອງຜູ້ເຊົ່າ ຊຶ່ງໄດ້ບົ່ງໄວ້ໃນສັນຍາເຊົ່າສິນເຊື່ອ ລວມທັງພັນທະໃນການຊຳລະຄ່າເຊົ່າ ຕ້ອງປະຕິບັດຢ່າງເດັດຂາດ ແລະ ຕາຍຕົວ ເມື່ອຜູ້ເຊົ່າຫາກໄດ້ຮັບເອົາຊັບໄປແລ້ວ.
3. ຜູ້ເຊົ່າ ຕ້ອງນຳໃຊ້ຊັບຢ່າງສົມເຫດສົມຜົນ ສອດຄ່ອງກັບຄຸນລັກສະນະ ແລະ ເປົ້າໝາຍຂອງຊັບ, ຕ້ອງປົກປັກຮັກສາ, ສ້ອມແປງ ແລະ ຮັກສາຊັບໃຫ້ຢູ່ໃນສະພາບທີ່ດີ.
4. ເມື່ອໝົດກຳນົດເວລາເຊົ່າ ຫຼື ສັນຍາຫາກສິ້ນສຸດລົງ ແລະ ເມື່ອຜູ້ເຊົ່າຫາກບໍ່ຕົກລົງວ່າຈະສືບຕໍ່ເຊົ່າ ຫຼື ວ່າຈະຊື້ເອົາຊັບນັ້ນ ຜູ້ເຊົ່າຈະຕ້ອງສົ່ງຊັບທີ່ເຊົ່ານັ້ນຄືນໃຫ້ຜູ້ໃຫ້ເຊົ່າໃນສະພາບທີ່ດີ ເໝືອນກັນກັບສະພາບທີ່ຕົນໄດ້ຮັບໃນເບື້ອງຕົ້ນ, ຍົກເວັ້ນການຫຼຸ້ຍຫ້ຽນປົກກະຕິ;
5. ຜູ້ເຊົ່າ ຕ້ອງຮັບຜິດຊອບຕໍ່ການເສັຍຫາຍຂອງຊັບທີ່ໄດ້ເຊົ່າ ເລີ່ມແຕ່ເວລາທີ່ໄດ້ຮັບຊັບຈົນເຖິງເວລາສົ່ງຊັບນັ້ນຄືນ ແກ່ຜູ້ໃຫ້ເຊົ່າ;
6. ຜູ້ເຊົ່າ ບໍ່ມີສິດນຳເອົາຊັບໄປຄ້ຳປະກັນ ຫຼື ສ້າງພັນທະໃດໜຶ່ງ ໃຫ້ກັບຊັບທີ່ໄດ້ເຊົ່ານັ້ນ;
7. ຜູ້ເຊົ່າ ຕ້ອງຮັບຜິດຊອບ ເສັຍພາສີຂາເຂົ້າ, ຄ່າທຳນຽມຈົດທະບຽນ, ອາກອນຊົມໃຊ້, ອາກອນລາຍໄດ້, ອາກອນຕໍ່ວິສາຫະກິດ ແລະ ອື່ນໆ ເວັ້ນເສັຍແຕ່ສັນຍາ ເຊົ່າສິນເຊື່ອຫາກໄດ້ ກຳນົດໄວ້ຢ່າງອື່ນ.

ມາດຕາ 7. ສິດ ແລະ ພັນທະຂອງຜູ້ສະໜອງສິນຄ້າ

1. ພັນທະຂອງຜູ້ສະໜອງສິນຄ້າ ທີ່ບົ່ງໄວ້ໃນສັນຍາສະໜອງສິນຄ້າ ຈະຕ້ອງປະຕິບັດຕໍ່ຜູ້ເຊົ່າ ຄືກັນກັບວ່າ ຜູ້ເຊົ່າເປັນຄູ່ສັນຍາສະໜອງສິນຄ້າ ຫລື ຖ້າຫາກວ່າ ຊັບທີ່ໃຫ້ເຊົ່ານັ້ນ ໄດ້ນຳສະໜອງໂດຍກົງໃຫ້ຜູ້ເຊົ່າ. ຢ່າງໃດກໍ່ຕາມ ຜູ້ສະໜອງສິນຄ້າ ຈະບໍ່ຮັບຜິດຊອບຕໍ່ຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າ ພ້ອມດຽວກັນ ກ່ຽວກັບຄວາມເສັຍຫາຍອັນດຽວ.
2. ສິດຂອງຜູ້ເຊົ່າ ບົນພື້ນຖານ ສັນຍາສະໜອງສິນຄ້າ ຈະບໍ່ຖືກກະທົບໂດຍການປ່ຽນແປງ ກຳນົດເວລາຂອງສັນຍາ ຊຶ່ງໄດ້ຮັບຄວາມເຫັນດີຈາກຜູ້ເຊົ່າ ກ່ອນແລ້ວ, ເວັ້ນເສັຍແຕ່ຜູ້ເຊົ່າ ຫາກເຫັນດີນຳການປ່ຽນແປງນັ້ນ.

ມາດຕາ 8. ສິດ ແລະ ພັນທະຂອງຜູ້ອື່ນໆ

1. ສິດຂອງຜູ້ໃຫ້ເຊົ່າ ຕໍ່ຊັບທີ່ໃຫ້ເຊົ່ານັ້ນ ບໍ່ຈຳກັດສະເພາະແຕ່ສິດໃນກຳມະສິດເທົ່ານັ້ນ ແຕ່ຫາກຍັງມີສິດອື່ນໆອີກຕໍ່ຊັບດັ່ງກ່າວ ຊຶ່ງມີຜົນບັງຄັບຕໍ່ຄະນະຄວບຄຸມຊັບ ຂອງຜູ້

ເຊົ່າ ລວມທັງເຈົ້າໜີ້ ໃນນັ້ນ ມີເຈົ້າໜີ້ ຊຶ່ງໄດ້ອາຍັດ, ຍຶດ ຫລື ໄດ້ມີການບັງຄັບປະຕິບັດ ກ່ຽວກັບຊັບສິນຂອງຜູ້ເຊົ່າ ໃນກໍລະນີ ການລົ້ມລະລາຍຂອງຜູ້ເຊົ່າ.

2. ຂໍ້ກຳນົດຂອງມາດຕານີ້ ຈະບໍ່ມີຜົນກະທົບຕໍ່ບູລິມະສິດຂອງເຈົ້າໜີ້ອື່ນ ຊຶ່ງມີການອາຍັດ ຫຼື ການຄ້ຳປະກັນຢູ່ໃນຊັບ ທີ່ເນື່ອງມາຈາກບັນຫາອື່ນໆ ທີ່ບໍ່ແມ່ນການອາຍັດ ຫລື ການປະຕິບັດ ທີ່ກ່າວມາຂ້າງເທິງນີ້.

ມາດຕາ 9. ການມອບໝາຍ ແລະ ການໂອນ

1. ຜູ້ໃຫ້ເຊົ່າ ມີສິດໂອນ ຫຼື ປະຕິບັດຢ່າງອື່ນ ກ່ຽວກັບສິດຂອງຕົນ ຕໍ່ຊັບທີ່ໃຫ້ເຊົ່ານັ້ນ ຫຼື ບົນພື້ນຖານສັນຍາເຊົ່າສິນເຊື່ອ ໂດຍບໍ່ຈຳເປັນຕ້ອງ ໄດ້ຮັບຄວາມເຫັນດີຈາກຜູ້ເຊົ່າ. ແຕ່ການໂອນນັ້ນ ຈະບໍ່ເຮັດໃຫ້ຜູ້ໃຫ້ເຊົ່າພົ້ນຈາກຄວາມຮັບຜິດຊອບຕາມສັນຍາເຊົ່າສິນເຊື່ອ ຫຼື ປ່ຽນແປງປະເພດຂອງສັນຍາເຊົ່າສິນເຊື່ອ.

2. ຜູ້ເຊົ່າ ມີສິດໂອນ ສິດຄອບຄອງ ຫຼື ສິດນຳໃຊ້ຊັບທີ່ໃຫ້ເຊົ່າ ຫລື ສິດອື່ນ ໆ ຕາມທີ່ໄດ້ກຳນົດໄວ້ໃນສັນຍາເຊົ່າສິນເຊື່ອໄດ້ ກໍ່ຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີຈາກຜູ້ໃຫ້ເຊົ່າ ແລະ ບໍ່ໃຫ້ແຕະຕ້ອງສິດຂອງບຸກຄົນທີສາມ.

## ພາກທີ III
## ບໍລິສັດເຊົ່າສິນເຊື່ອ

ມາດຕາ10. ບໍລິສັດເຊົ່າສິນເຊື່ອ

ບໍລິສັດເຊົ່າສິນເຊື່ອ ຊຶ່ງໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດໃນ ສປປ ລາວ ຕ້ອງມີຖານະເປັນນິຕິບຸກຄົນ ພາຍໃຕ້ກົດໝາຍຂອງ ສປປ ລາວ ຫລື ເປັນນິຕິບຸກຄົນ ພາຍໃຕ້ກົດໝາຍຂອງປະເທດຕົນ ແລະ ກົດໝາຍວ່າດ້ວຍການລົງທຶນຕ່າງປະເທດຂອງ ສປປ ລາວ ເພື່ອດຳເນີນວຽກງານທຸລະກິດເຊົ່າສິນເຊື່ອ ໃນ ສປປ ລາວ. ບຸກຄົນຈະບໍ່ມີສິດໄດ້ຮັບອະນຸຍາດ ໃຫ້ເປັນບໍລິສັດເຊົ່າສິນເຊື່ອໄດ້.

ຊື່ ຂອງບໍລິສັດເຊົ່າສິນເຊື່ອ ຕ້ອງປະກອບດ້ວຍຊື່ຂອງຕົນ ພ້ອມດ້ວຍຄຳວ່າ " ບໍລິສັດເຊົ່າສິນເຊື່ອ ".

ບໍລິສັດເຊົ່າສິນເຊື່ອ ມີສິດດຳເນີນວຽກງານທຸກຢ່າງ ທີ່ກ່ຽວກັບ ທຸລະກິດເຊົ່າສິນເຊື່ອ ໂດຍອີງຕາມການດຳເນີນທຸລະກິດສາກົນ ດັ່ງຕໍ່ລົງໄປນີ້ :

1. ການຊື້ຊັບສິນ ເພື່ອຈຸດປະສົງໃຫ້ເຊົ່າ;
2. ການຈັດຫາຊັບສິນໃຫ້ຜູ້ເຊົ່າ ດ້ວຍສັນຍາເຊົ່າ;

3. ການຂາຍ ຫຼື ການໂອນຊັບດ້ວຍຮູບການອື່ນໆ ໃຫ້ຜູ້ເຊົ່າ ຫຼື ບຸກຄົນທີສາມ ໃນອາຍຸຂອງສັນຍາເຊົ່າ ຫຼື ໃນໄລຍະສຸດທ້າຍຂອງ ອາຍຸສັນຍາ;
4. ການໄດ້ຮັບການຄໍ້າປະກັນ, ໃບສັນຍາໃຊ້ໜີ້, ພັນທະບັດແລກເງິນ ຫຼື ການເຮັດສັນຍາອື່ນ ໆ ເພື່ອສົ່ງເສີມ ແລະ ຊຸກຍູ້ ກິດຈະການເຊົ່າສິນເຊື່ອ.

ມາດຕາ11. ການສ້າງຕັ້ງ ບໍລິສັດເຊົ່າສິນເຊື່ອ

ນິຕິບຸກຄົນ ພາຍໃນ ທີ່ມີຈຸດປະສົງຢາກສ້າງຕັ້ງ ບໍລິສັດເຊົ່າສິນເຊື່ອ ຕ້ອງໄດ້ເຮັດຄໍາຮ້ອງຍື່ນຕໍ່ທະນາຄານແຫ່ງ ສປປ ລາວ, ສໍາລັບ ນິຕິບຸກຄົນຕ່າງປະເທດນັ້ນ ຕ້ອງເຮັດຄໍາຮ້ອງຍື່ນຕໍ່ ຄະນະກໍາມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂອງ ຕ່າງປະເທດ ຢູ່ ສປປ ລາວ ແລະ ໃຫ້ປະຕິບັດຕາມເງື່ອນໄຂຂອງກົດໝາຍ ວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງ ການລົງທຶນ ຂອງ ຕ່າງປະເທດ ຢູ່ ສປປ ລາວ.

ຄໍາຮ້ອງຕ້ອງປະກອບດ້ວຍຂໍ້ມູນ ແລະ ເອກະສານຕ່າງ ໆ ຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ໄດ້ກໍານົດອອກ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາຄໍາຮ້ອງດັ່ງກ່າວພາຍໃນ 60 ວັນ ນັບແຕ່ມື້ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ນິຕິບຸກຄົນ ຊຶ່ງຮ້ອງຂໍສ້າງຕັ້ງບໍລິສັດເຊົ່າສິນເຊື່ອ ຕ້ອງມີເງື່ອນໄຂ ຕົ້ນຕໍ ດັ່ງນີ້:
1. ຕ້ອງມີທຶນຈົດທະບຽນຕໍ່າສຸດ 500.000.000 ກີບ;
2. ຕ້ອງມີຖານະການເງິນໝັ້ນຄົງ;
3. ຕ້ອງມີວິຊາການດ້ານການເຊົ່າສິນເຊື່ອ ແລະ ມີປະສົບການໃນການດໍາເນີນທຸລະກິດ.

ມາດຕາ12. ບໍລິສັດ ເຊົ່າສິນເຊື່ອຂອງທະນາຄານ

ທະນາຄານທຸລະກິດຢູ່ ສປປ ລາວ ມີສິດສ້າງຕັ້ງບໍລິສັດເຊົ່າສິນເຊື່ອ ຂຶ້ນໄດ້ ໂດຍປະຕິບັດຕາມຂັ້ນຕອນ ແລະ ລະບຽບການສ້າງຕັ້ງ ທີ່ໄດ້ກໍານົດໄວ້ໃນມາດຕາ11 ເທິງນີ້.

ບໍລິສັດເຊົ່າສິນເຊື່ອ ທີ່ອະນຸຍາດໃຫ້ສ້າງຕັ້ງຂຶ້ນນັ້ນ ຕ້ອງເປັນນິຕິບຸກຄົນ ທີ່ເປັນເອກະລາດທາງດ້ານການເງິນ ແລະ ໃຫ້ແຍກອອກຈາກ ທະນາຄານທີ່ກ່ຽວຂ້ອງ.

ມາດຕາ13. ການພົວພັນລະຫວ່າງ ບໍລິສັດເຊົ່າສິນເຊື່ອ ກັບທະນາຄານ

ທະນາຄານທຸລະກິດ ທີ່ໄດ້ສ້າງຕັ້ງບໍລິສັດ ຫລື ເຂົ້າຫຸ້ນຮ່ວມກັບບໍລິສັດເຊົ່າສິນເຊື່ອໃດໜຶ່ງ ບໍ່ມີສິດໃຫ້ສິດພິເສດດ້ານການເງິນ, ການບໍລິການ ແກ່ບໍລິສັດເຊົ່າສິນເຊື່ອ ທີ່ຕົນສ້າງຕັ້ງຂຶ້ນ ຫລື ເຂົ້າຫຸ້ນສ່ວນນັ້ນແຕ່ຢ່າງໃດ.

ການບໍລິການດ້ານທະນາຄານ ແກ່ບໍລິສັດເຊົ່າສິນເຊື່ອ ທີ່ຕົນສ້າງຕັ້ງຂຶ້ນ ຫລື ເຂົ້າຫຸ້ນສ່ວນນັ້ນ ໃຫ້ປະຕິບັດ ຄືກັບລູກຄ້າທົ່ວໄປ.

ມາດຕາ14. ສິດ ແລະ ພັນທະຂອງ ບໍລິສັດເຊົ່າສິນເຊື່ອ

ບໍລິສັດເຊົ່າສິນເຊື່ອ ມີສິດ ແລະ ພັນທະດັ່ງຕໍ່ໄປນີ້:

1. ບໍ່ມີສິດລະດົມເງິນຝາກ ແຕ່ສາມາດຊອກຫາແຫລ່ງທຶນ ດ້ວຍຮູບການອອກໃບສັນຍາໃຊ້ໜີ້ ແລະ ເຄື່ອງມືອື່ນ ໆ ທີ່ມີອາຍຸແຕ່ ໜຶ່ງ ປີຂຶ້ນໄປ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ;
2. ມີສິດ ເປີດສາຂາຂອງຕົນ ຢູ່ ສປປ ລາວ ໄດ້ ຕາມການເຫັນດີຂອງ ທະນາຄານ ແຫ່ງ ສປປ ລາວ;
3. ມີສິດເຂົ້າເປັນສະມາຊິກຂອງສູນຂໍ້ມູນສິນເຊື່ອ ຂອງທະນາຄານແຫ່ງ ສປປ ລາວ;
4. ສົ່ງບົດລາຍງານປະຈຳປີ ທີ່ໄດ້ຮັບຮອງ ຈາກອົງການກວດກາພາຍນອກ ໃຫ້ທະນາຄານແຫ່ງ ສປປ ລາວ ແລະ ບົດລາຍງານອື່ນ ໆ ຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
5. ຕ້ອງປະຕິບັດຕາມລະບອບບັນຊີວິສາຫະກິດຂອງ ສປປ ລາວ ຢ່າງເຂັ້ມງວດ;
6. ຕ້ອງເສຍອາກອນກຳໄລ ແລະ ພັນທະອື່ນ ໆ ຕາມລະບຽບກົດໝາຍ.

## ພາກທີ IV
## ມາດຕະການຕໍ່ຜູ້ລະເມີດ

ມາດຕາ 15. ມາດຕະການຕໍ່ ຜູ້ເຊົ່າ

ຜູ້ເຊົ່າ ທີ່ໄດ້ລະເມີດ ສັນຍາເຊົ່າສິນເຊື່ອ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 5. ຂໍ້ 5 ຂອງ ດຳລັດ ສະບັບນີ້ ເຊັ່ນ: ບໍ່ຊຳລະຄ່າເຊົ່າ ສອງ ຄັ້ງ ຕິດຕໍ່ກັນ, ສ້າງຄວາມເສັຍຫາຍຕໍ່ຊັບທີ່ເຊົ່າ, ຜູ້ໃຫ້ເຊົ່າມີສິດ ນຳໃຊ້ ມາດຕະການດັ່ງຕໍ່ໄປນີ້:

1. ຮຽກຮ້ອງໃຫ້ ຜູ້ເຊົ່າປະຕິບັດສັນຍາ;
2. ຮຽກຮ້ອງໃຫ້ພະນັກງານ ປະຕິບັດຄຳຕັດສິນຂອງສານ ບັງຄັບໃຫ້ຜູ້ເຊົ່າ ສົ່ງຊັບນັ້ນຄືນໃຫ້ ຜູ້ໃຫ້ເຊົ່າ;
3. ນຳໃຊ້ມາດຕະການອື່ນ ໆ ທີ່ກຳນົດໄວ້ ໃນລະບຽບກົດໝາຍ.

ມາດຕາ 16. ມາດຕະການຕໍ່ ບໍລິສັດເຊົ່າສິນເຊື່ອ

ບໍລິສັດເຊົ່າສິນເຊື່ອ ທີ່ໄດ້ລະເມີດ ດຳລັດວ່າດ້ວຍການເຊົ່າສິນເຊື່ອ ແລະ ລະບຽບກົດໝາຍອື່ນ ໆ ເຊັ່ນ: ບໍ່ລາຍງານ ຫລື ລາຍງານໃຫ້ທະນາຄານ ແຫ່ງ ສປປ ລາວ ບໍ່**ທັນ**ກຳນົດເວລາ, ບໍ່ເສັຍອາກອນລາຍໄດ້ ຈະຖືກປະຕິບັດມາດຕະການ ແລ້ວແຕ່ກໍລະນີ**ໜັກ** ຫຼື ເບົາ ດັ່ງຕໍ່ໄປນີ້:

1. ກ່າວເຕືອນຢ່າງເປັນລາຍລັກອັກສອນ;
2. ທົດແທນຄ່າເສັຍຫາຍໃຫ້ແກ່ຄູ່ສັນຍາ;

3. ໃຈະກິດຈະການ ຫລື ຈຳກັດການເຄື່ອນໄຫວ;

4. ຖອນໃບອະນຸຍາດດຳເນີນທຸລະກິດ;

5. ມາດຕະການອື່ນ ໆ ທີ່ກຳນົດໄວ້ໃນລະບຽບກົດຫມາຍ.

## ພາກທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 17. ການຈັດຕັ້ງປະຕິບັດ

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ດຳເນີນທຸລະກິດ ການເຊົ່າສິນເຊື່ອ ກ່ອນການປະກາດໃຊ້ດຳລັດ ວ່າດ້ວຍ ການເຊົ່າສິນເຊື່ອ ຕ້ອງໄດ້ປັບປຸງແປງ ປັບປຸງໃຫ້ຖືກຕ້ອງ ແລະ ສອດຄ່ອງກັບດຳລັດສະບັບນີ້ ພາຍໃນກຳນົດ 360 ວັນ ນັບແຕ່ມື້ທີ່ດຳລັດ ສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

ມອບໃຫ້ທະນາຄານ ແຫ່ງ ສປປ ລາວ, ກະຊວງ ແລະ ພາກສ່ວນ ທີ່ກ່ຽວຂ້ອງອື່ນ ໆ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຕາມຫນ້າທີ່ຂອງໃຜລາວ.

### ມາດຕາ 18. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 10 FEB 1999

ນາຍົກລັດຖະມົນຕີ,

ສີສະຫວາດ ແກ້ວບຸນພັນ